ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ດັກລັກ ຣັບເບີ ຈຳກັດ

**(DAKLAORUCO)** ເລກທີ 7/ລບ-ບສ

ປາກເຊ, ວັນທີ 22 ເດືອນ 06 ປີ 2024

# ກົດລະບຽບ
# ວ່າດ້ວຍຄວາມປອດໄພແລະສຸຂະພາບແຮງງານ

- ອີງຕາມສະພາບຄວາມເປັນຈິງທີ່ Daklaoruco.

ດັ່ງນັ້ນ, ຜູ້ອຳນວຍການບໍລິສັດ ຈຶ່ງໄດ້ປະກາດໃຊ້ລະບຽບການວ່າດ້ວຍຄວາມປອດໄພ ແລະ ສຸຂະພາບແຮງງານ, ເຊິ່ງລາຍລະອຽດມີດັ່ງນີ້:

**1. ຂອບເຂດນຳໃຊ້**

ຮັບປະກັນຄວາມປອດໄພ, ສຸຂະພາບແຮງງານ; ນະໂຍບາຍ, ສະຫັວດດີການສຳລັບຜູ້ຖືກອຸບັດຕິເຫດແຮງງານ, ພະຍາດອາຊີບ; ຄວາມຮັບຜິດຊອບແລະສິດຂອງບໍລິສັດ, ຜູ້ອອກແຮງງານທີ່ກ່ຽວຂ້ອງກັບວຽກງານຄວາມປອດໄພ, ສຸຂະພາບແຮງງານ.

**2. ເປົ້າໝາຍນຳໃຊ້:** ພະນັກງານກຳມະກອນທັງໝົດ ຂອງບໍລິສັດ, ລວມທັງພະນັກງານ ກຳມະກອນ ໃນໄລຍະລອງວຽກ.

**3. ຄວາມຮັບຜິດຊອບຂອງບໍລິສັດ (ຜູ້ນຳໃຊ້ແຮງງານ)**

- ປະສານສົມທົບກັບອົງການປະກັນສັງຄົມທ້ອງຖິ່ນໂຄສະນາ ແລະ ສົ່ງເສີມໃຫ້ຜູ້ອອກແຮງງານເຂົ້າຮ່ວມປະກັນສັງຄົມຕາມລະບຽບການຂອງລັດຖະບານ.

- ເບີກຈ່າຍ (ບໍ່ເສຍຄ່າ) ຊຸດປ້ອງກັນແຮງງານໃຫ້ກຳມະກອນ: ໂສ້ງເສື້ອ, ເກີບໂບກ, ຊົບມີຢາງພາລາ, ຜ້າປິດປາກ, ໜ້າກາກປ້ອງກັນສານພິດ….ຕາມເປົ້າໝາຍການນຳໃຊ້.

- ເຜີຍແຜ່, ກວດກາຕັກເຕືອນ ການປະຕິບັດບັນດາລະບຽບການ ກ່ຽວຂ້ອງກັບຄວາມປອດໄພແຮງງານສຳລັບຜູ້ອອກແຮງງານ.

- ປະກາດໃຊ້ແລະເຜີຍແຜ່ລະບຽບການກ່ຽວຂ້ອງກັບການນຳໃຊ້ບັນດາເຄື່ອງຈັກໃນການປຸງແຕ່ງຢາງພາລາ.

- ປະກາດໃຊ້ແລະເຜີຍແຜ່ບັນດາລະບຽບການກ່ຽວຂ້ອງກັບການນຳໃຊ້ເຄມີ.

- ປະສານສົມທົບກັບບັນດາອົງການຄຸ້ມຄອງຂອງລັດ ຈັດຕັ້ງປະຕິບັດການຝຶກອົບຮົມ ຄວາມປອດໄພ ແຮງງານ, ປ້ອງກັນອັກຄີໄພ ໃນແຕ່ລະປີໃຫ້ພະນັກງານກຳມະກອນຂອງບໍລິສັດ.

- ກວດກາ, ສ້ອມແປງບ່ອນເຮັດວຽກຂອງຜູ້ອອກແຮງງານເປັນປະຈຳ. ໂຮງງານປຸງແຕ່ງຢາງພາລາຕ້ອງຮັບປະກັນແສງສະຫວ່າງພຽງພໍ ແລະ ປອດໂປ່ງ.

- ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ, ຈັດຕັ້ງກວດສຸຂະພາບໃຫ້ກຳມະກອນປີລະເທື່ອ.

4. ຄວາມຮັບຜິດຊອບຂອງຜູ້ອອກແຮງງານ

**4.1 ກົດລະບຽບສຳລັບກຳມະກອນຊຸດຄົ້ນຂີດຢາງ**

- ຕ້ອງນຳໃຊ້ເຄື່ອງປ້ອງກັນອອກແຮງງານທີ່ບໍລິສັດເບີກໃຫ້ເປັນຕົ້ນແມ່ນ ໂສ້ງ, ເສື້ອແຂນຍາວເພື່ອຫຼຸດຜ່ອນບໍ່ໃຫ້ຍຸງກັດ, ໃສ່ເກີບໂບກເພື່ອຫຼຸດຜ່ອນການເກີດບາດເຈັບຍ້ອນໄມ້, ຫີນທີ່ມີຄວາມແຫຼມ, ງູ, ຂີ້ເຂັບກັດ…

- ໃນເວລາທີ່ບໍ່ໄດ້ຂີດຢາງ, ຕ້ອງມັດຄົມມີດໄວ້ດ້ວຍແພເພື່ອຮັບປະກັນຄົມມີດແລະປ້ອງກັນຜູ້ອອກແຮງງານແລະຄົນອ້ອມຂ້າງບໍ່ໃຫ້ເກີດບາດເຈັບຍ້ອນມີດ.

- ໃນເວລາເຮັດວຽກບໍ່ໃຫ້ຢອກກັນ.

**4.2 ກົດລະບຽບສຳລັບກຳມະກອນປຸງແຕ່ງຢາງພາລາ**

- ຕ້ອງນຳໃຊ້ເຄື່ອງປ້ອງກັນອອກແຮງງານທີ່ບໍລິສັດເບີກໃຫ້ເປັນຕົ້ນແມ່ນ ໂສ້ງ, ເສື້ອຢືດ, ເກີບແພ.

- ພະແນກກັນກ້າມຕ້ອງໃສ່ເກີບໂບກ, ຊົບມືຢາງພາລາ, ຜ້າປິດປາກໃນເວລາເຮັດວຽກ. ສະເພາະຜູ້ທີ່ປະຕິບັດວຽກງານປົນສານເຄມີຕ້ອງໃສ່ໜ້າກາກປ້ອງກັນສານພິດ….

- ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງກັບສານເຄມີທຸກປະເພດ.

- ປະຕິບັດຖືກຕ້ອງຕາມເຕັກນິກໃນການນຳໃຊ້ເຄື່ອງຈັກ (ໂຮງງານປຸງແຕ່ງເປັນຜູ້ຮ່າງແລະປະກາດໃຊ້ລະບຽບການສະບັບນີ້ແລ້ວສົ່ງໃຫ້ບໍລິສັດອະນຸມັດເພື່ອເຜີຍແຜ່ໃຫ້ຜູ້ອອກແຮງງານ).

**4.3 ກົດລະບຽບສຳລັບກຳມະກອນຂັບລົດ, ນຳໃຊ້ເຄື່ອງຈັກ, ກົນຈັກ**

- ຕ້ອງນຳໃຊ້ເຄື່ອງປ້ອງກັນອອກແຮງງານທີ່ບໍລິສັດເບີກໃຫ້ ເປັນຕົ້ນແມ່ນ ໂສ້ງ, ເສື້ອຢືດ, ໝວກ, ເກີບແພ, ແວ່ນຕາປ້ອງກັນ(ສຳລັບກຳມະກອນຈອດເຫຼັກຕ່າງໆ), ຊົບມືຜ້າແພ, ຊົບມືກັນຄວາມຮ້ອນຕາມແຕ່ລະໜ້າວຽກທີ່ປະຕິບັດ.

- ມີໃບອະນຸຍາດຂັບຂີ່ລົດ, ນຳໃຊ້ເຄື່ອງຈັກຖືກຕ້ອງຕາມປະເພດລົດ/ເຄື່ອງຈັກທີ່ໄດ້ມອບໝາຍໃຫ້ຄຸ້ມຄອງແລະນຳໃຊ້.

- ເດັດຂາດບໍ່ໃຫ້ນຳໃຊ້ສານກະຕຸ້ນເປັນຕົ້ນແມ່ນ ຢາເສບຕິດ, ເຫຼົ້າ, ເບຍ….

**4.4 ກົດລະບຽບສຳລັບກຳມະກອນທີ່ກ່ຽວຂ້ອງກັບສານເຄມີ**

- ຕ້ອງນຳໃຊ້ເຄື່ອງປ້ອງກັນອອກແຮງງານຕາມລະບຽບການແລະປະຕິບັດຫຼັກການນຳໃຊ້ແລະຄວບຄຸມສານເຄມີ (ຫ້ອງຄຸ້ມຄອງຄຸນນະພາບ ບໍລິສັດ ເປັນຜູ້ຮ່າງແລະປະກາດໃຊ້ລະບຽບການສະບັບນີ້).

**5. ກົດລະບຽບແກ້ໄຂໃນເວລາທີ່ເກີດອຸບັດຕິເຫດແຮງງານ, ເສຍກຳລັງແຮງງານ, ພະຍາດອາຊີບ**

**5.1 ກົດລະບຽບທົ່ວໄປ**

- ອຸບັດຕິເຫດແຮງງານ: ແມ່ນອຸບັດຕິເຫດທີ່ເກີດຂຶ້ນສຳລັບຜູ້ອອກແຮງງານໃນເວລາເຮັດວຽກຍ້ອນຜູ້ນຳໃຊ້ແຮງງານຫຼືຕາງໜ້າຜູ້ນຳໃຊ້ແຮງງານເປັນຜູ້ຈັດວຽກໃຫ້ເຮັດ (ລວມທັງໃນໄລຍະໄປກັບເພື່ອຮັບໃຊ້ວຽກງານ).

- ອຸບັດຕິເຫດເກີດຂຶ້ນສຳລັບຜູ້ອອກແຮງງານຍ້ອນບັນດາວຽກງານທີ່ບໍ່ແມ່ນຜູ້ນຳໃຊ້ແຮງງານຫຼືຕາງໜ້າຜູ້ນຳໃຊ້ແຮງງານຈັດວຽກໃຫ້ເຮັດ, ຖືວ່າບໍ່ແມ່ນອຸບັດຕິເຫດແຮງງານ.

- ອຸບັດຕິເຫດເທິງເສັ້ນທາງແຕ່ບ່ອນຢູ່ໄປຫາບ່ອນເຮັດວຽກແລະແຕ່ບ່ອນເຮັດວຽກໄປຫາບ່ອນຢູ່ແມ່ນອຸບັດຕິເຫດຈາລະຈອນ, ຖືວ່າບໍ່ແມ່ນອຸບັດຕິເຫດແຮງງານ.

**5.2 ພະຍາດອາຊີບ:**

- ແມ່ນພະຍາດທີ່ເກີດຂຶ້ນຍ້ອນເງື່ອນໄຂແຮງງານເປັນຜົນຮ້າຍຂອງອາຊີບທີ່ສົ່ງຜົນກະທົບເຖິງຜູ້ອອກແຮງງານ. ພະຍາດອາຊີບສາມາດປ້ອງກັນໄດ້.

- ສຳລັບຂະແໜງຂຸດຄົ້ນແລະປຸງແຕ່ງຢາງພາລາພະຍາດອາຊີບຕົ້ນຕໍແມ່ນຍ້ອນເຮັດວຽກໃນສິ່ງແວດລ້ອມທີ່ມີຄວາມຊຸ່ມຕະຫຼອດແລະແກ່ຍາວ.

**5.3 ແກ້ໄຂໃນເວລາເກີດອຸບັດຕິເຫດແຮງງານ:**

- ໃນເວລາເກີດອຸບັດຕິເຫດແຮງງານຕ້ອງຢຸດການໃຊ້ງານຂອງເຄື່ອງຈັກທີ່ກໍ່ໃຫ້ເກີດອຸບັດຕິເຫດນັ້ນທັນທີ.

- ໃນເວລາເກີດອຸບັດຕິເຫດແຮງງານຕ້ອງລາຍງານໃຫ້ຂັ້ນເທິງຮັບຊາບທັນທີ.

- ຈັດຕັ້ງປະຕິບັດປະຖົມພະຍາບານເບື້ອງຕົ້ນໃຫ້ຜູ້ທີ່ເກີດອຸບັດຕິເຫດແລະນຳສົ່ງໂຮງໝໍທີ່ໃກ້ສຸດ.

**5.4 ສະຫັວດດີການຂອງຜູ້ອອກແຮງງານທີ່ເກີດອຸບັດຕິເຫດ, ພະຍາດອາຊີບ:**

- ຄ່າໃຊ້ຈ່າຍໃນການປິ່ນປົວ, ເງິນຄ່າຢາແລະອຸປະກອນການແພດຕ່າງໆຕາມການວິເຄາະຂອງໂຮງໝໍທ້ອງຖິ່ນ (ນອກຈາກຄ່າໃຊ້ຈ່າຍທີ່ອີງການປະກັນສັງຄົມຈ່າຍໃຫ້, ລາຍຈ່າຍທີ່ຍັງເຫຼືອແມ່ນບໍລິສັດເປັນຜູ້ຈ່າຍ).

-ໃນເວລາປິ່ນປົວໄດ້ຮັບອຸດໜູນທຽບເທົ່າກັບເພດານເງິນເດືອນເຂົ້າປະກັນສັງເຂົ້າຕາມລະບຽບຕາມຕຳແໜ່ງວຽກງານ. ໄລຍະເວລາແມ່ນ ຕາມການຢັ້ງຢືນຈາກໂຮງໝໍທີ່ປິ່ນປົວ.

- ຈັດວຽກອື່ນໃຫ້ເຮັດຕາມຄວາມເໝາະສົມຂອງສຸຂະພາບ. ໃນກໍລະນີບໍ່ສາມາດຈັດວຽກໃຫ້ເຮັດໄດ້ຫຼືສຸຂະພາບບໍ່ສາມາດເຮັດວຽກໄດ້ແມ່ນຈະໄດ້ຮັບເງິນອຸດໜູນເທົ່າກັບ 06 ເດືອນຂອງເງິນປະກັນສັງຄົມຕາມລະບຽບຕາມຕຳແໜ່ງວຽກງານແລະທາງ ບໍລິສັດ ເປັນຜູ້ຈ່າຍ.

* ໃນກໍລະນີເສຍຊີວິດ:

- ຜູ້ອອກແຮງງານທີ່ເຂົ້າປະກັນສັງຄົມ: ໄດ້ຮັບສະຫັວດດີການຕາມລະບຽບຂອງປະກັນສັງຄົມລາວຫຼືຫວຽດນາມ.

- ໃນກໍລະນີທີ່ບໍ່ເຂົ້າຮ່ວມປະກັນສັງຄົມ: ແມ່ນທາງບໍລິສັດຈະເປັນຜູ້ຈ່າຍເງິນອຸດໜູນເທົ່າກັບ 12 ເດືອນຂອງເງິນເດືອນເຂົ້າປະກັນສັງຄົມຕາມຕຳແໜ່ງວຽກງານ.

(*ໝາຍເຫດ:* ເພດານເງິນເຂົ້າປະກັນສັງຄົມ: ສຳລັບຄົນລາວແມ່ນຕາມລະບຽບຂອງປະກັນສັງຄົມລາວ; ສຳລັບຄົນຫວຽດນາມແມ່ນຕາມລະບຽບຂອງປະກັນສັງຄົມຫວຽດນາມ).

**6. ບັນດາເນື້ອໃນອື່ນໆ**

- ກົດລະບຽບສະບັບນີ້ໄດ້ປະກາດໃຊ້ເປັນພາສາລາວແລະພາສາຫວຽດນາມ.

- ຫ້ອງການ ບໍລິສັດ ປະສານສົມທົບກັບຫົວໜ້າກົມກອງ, ເຜີຍແຜ່ລະບຽບການສະບັບນີ້ໃຫ້ຜູ້ອອກແຮງງານຮັບຮູ້ແລະເຂົ້າໃຈ.

- ບັນດາເນື້ອໃນອື່ນໆ ທີ່ບໍ່ໄດ້ລະບຸໄວ້ໃນລະບຽບການສະບັບນີ້ ແມ່ນໄດ້ນຳໃຊ້ຕາມລະບຽບການ ທີ່ກົດໝາຍກຳນົດໄວ້.

- ລະບຽບການສະບັບນີ້ມີຜົນສັກສິດນັບແຕ່ມື້ປະກາດໃຊ້.

- ໃນຂະບວນການປະຕິບັດຖ້າມີຂໍ້ຫຸ້ຍງຍາກ ຫົວໜ້າກົມກອງຕ້ອງລາຍງານເປັນລາຍລັກອັກສອນໃຫ້ ບໍລິສັດ ເພື່ອແກ້ໄຂ.

ຂ້າງເທິງນີ້ແມ່ນເນື້ອໃນລະບຽບການວ່າດ້ວຍຄວາມປອດໄພ, ສຸຂະພາບແຮງງານບໍລິສັດ. ຮຽກຮ້ອງໃຫ້ພະນັກງານກຳມະກອນຜູ້ອອກແຮງງານທັງໝົດຂອງບໍລິສັດຈົ່ງອີງໃສ່ຜັນຂະຫຍາຍປະຕິບັດ.

**ຜູ້ອຳນວຍການບໍລິສັດ**

ກະຊວງ ກະສິກຳ ແລະ ປ່າໄມ້
ບໍລິສັດ ດັກລັກ ຣັບເບີ ຈຳກັດ
DAKLAK RUBBER CO.,LTD
ແຂວງ ຈຳປາ ສັກ

Nguyễn Đức Hạnh

*ບ່ອນສົ່ງ:*

- DRI (ແທນລາຍງານ);
- ຄະນະນຳ ບສ;
- ບັນດາກົມກອງ;
- ບັນດາຫ້ອງການ ບສ;
- ສຳເນົາ.